ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ກົມການເມືອງສູນກາງພັກ

ເລກທີ 030 /ກມສພ
ນະຄອນຫຼວງວຽງຈັນ,ວັນທີ 03 ມັງກອນ 2018

# ມະຕິ
# ວ່າດ້ວຍມາດຕະຖານຂອງພະນັກງານນໍາພາ-ຄຸ້ມຄອງ

- ອີງຕາມ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ X ຂອງພັກ ກ່ຽວກັບການປ່ຽນແປງໃໝ່ວຽກງານພະນັກງານ ແລະ ກົດລະບຽບຂອງພັກປະຊາຊົນປະຕິວັດລາວ ສະໄໝທີ X
- ອີງໃສ່ ລັດຖະທໍາມະນູນ ແລະ ກົດໝາຍ ແຫ່ງ ສປປ ລາວ
- ອີງໃສ່ ຄວາມຮຽກຮ້ອງຕ້ອງການໃນການພັດທະນາປະເທດຊາດໃນໄລຍະໃໝ່
- ອີງຕາມ ມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ X ກ່ຽວກັບວຽກງານພະນັກງານ
- ອີງຕາມ ການສະເໜີຂອງ ຄະນະຈັດຕັ້ງສູນກາງພັກ.

## ກົມການເມືອງສູນກາງພັກ ຕົກລົງ
## ພາກທີ I
## ຂໍ້ບັນຍັດລວມ

**ມາດຕາ 1: ຈຸດປະສົງຄາດໝາຍ**

ມະຕິສະບັບນີ້ ກໍານົດເນື້ອໃນມາດຕະຖານລວມ, ມາດຕະຖານສະເພາະຂອງຕໍາແໜ່ງ ແລະ ກຸ່ມຕໍາແໜ່ງພະນັກງານນໍາພາ-ຄຸ້ມຄອງ ໃນທົ່ວລະບົບການເມືອງ ແຫ່ງ ສປປ ລາວ ເປັນພື້ນຖານໃນການເລືອກເຟັ້ນສ້າງແຜນກໍານົດ, ກໍ່ສ້າງ, ບໍາລຸງ, ຕີລາຄາ, ສັບຊ້ອນ, ຈັດວາງ, ແຕ່ງຕັ້ງພະນັກງານເຂົ້າໃນຕໍາແໜ່ງນໍາພາ-ຄຸ້ມຄອງແຕ່ລະຂັ້ນ, ເປັນບ່ອນອີງໃຫ້ພະນັກງານ, ສະມາຊິກພັກ ໄດ້ຝຶກຝົນຫຼໍ່ຫຼອມຕົນເອງ.

**ມາດຕາ 2 : ຂອບເຂດການນໍາໃຊ້**

ມະຕິສະບັບນີ້ ນໍາໃຊ້ສໍາລັບພະນັກງານນໍາພາ-ຄຸ້ມຄອງຢູ່ໃນອົງການຈັດຕັ້ງພັກ-ລັດ, ກໍາລັງປະກອບອາວຸດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ວິສະຫະກິດຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ.

# ພາກທີ II

## ມາດຕະຖານຂອງພະນັກງານນຳພາ-ຄຸ້ມຄອງ

**ມາດຕາ 3: ມາດຕະຖານລວມ**

1. ດ້ານຄຸນທາດການເມືອງ

- ຍຶດໝັ້ນຕໍ່ອຸດົມການສັງຄົມນິຍົມ; ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ, ຕໍ່ລະບອບປະຊາທິປະໄຕ ປະຊາຊົນ ຢ່າງໝັກແໜ້ນ; ມີຫຼັກໝັ້ນມິດ-ສັດຕູຈະແຈ້ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ, ເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ລັດຖະທຳມະນູນ, ກົດໝາຍຂອງລັດ ຢ່າງເຂັ້ມງວດ; ມີຄວາມສາມັກຄີເປັນເອກະພາບພາຍໃນພັກ, ພະນັກງານ, ສະມາຊິກພັກ; ມີປະຫວັດຕົ້ນກຳເນີດຈະແຈ້ງ ແລະ ການເຄື່ອນໄຫວດີ;
- ປະຕິບັດຕາມວັດຖຸປະສົງ ແລະ ອຸດົມການຂອງພັກ ຢ່າງສຸດກົກສຸດປາຍ, ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈຈາກພະນັກງານ, ສະມາຊິກພັກ, ມະຫາຊົນ ແລະ ປະຊາຊົນບັນດາເຜົ່າ, ເອົາໃຈໃສ່ຕໍ່ການຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ, ຈິດໃຈ ແລະ ເຄົາລົບສິດເປັນເຈົ້າຂອງປະຊາຊົນ;
- ກຽມພ້ອມຮັບເອົາທຸກໜ້າທີ່ວຽກງານ, ບໍ່ເລືອກວຽກເລືອກງານທີ່ການຈັດຕັ້ງ ແລະ ໝູ່ຄະນະມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ ແລະ ບໍ່ລັ່ງເລທໍ້ຖອຍຕໍ່ຄວາມຫຍຸ້ງຍາກໃດໆ.

2. **ດ້ານຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດ**

- ມີນ້ຳໃຈເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ. ສຸມສະຕິປັນຍາ ແລະ ກຳລັງວັງຊາຂອງຕົນເພື່ອຮັບໃຊ້ຊາດ ແລະ ຮັບໃຊ້ປະ ຊາຊົນດ້ວຍຄວາມບໍລິສຸດໃຈ;
- ດຳລົງຊີວິດດ້ວຍຄວາມບໍລິສຸດສັດຊື່, ປອດໃສ, ດຸໝັ່ນ, ອົດທົນ, ປະຢັດ, ມີຄວາມສຸພາບຮຽບຮ້ອຍ ແລະ ເຮັດແທ້ທຳຈິງ, ບຸກບືນຄົ້ນຄວ້າຮ່ຳຮຽນພັດທະນາຕົນເອງ; ເປັນເຈົ້າການສະກັດກັ້ນຕ້ານພະຍາດອາດຍາສິດເອກະຊົນ, ຕ້ານທຸກພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ, ປະກົດການຫຍໍ້ທໍ້ຕ່າງໆ ພາຍໃນພັກ ແລະ ທົ່ວສັງຄົມ;
- ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ ບົນພື້ນຖານແນວທາງນະໂຍບາຍ, ກົດລະບຽບຂອງພັກ, ກົດໝາຍຂອງລັດ, ບໍ່ມີແນວຄິດ ແລະ ການກະທຳແບ່ງແຍກຄວາມສາມັກຄີ, ແນວຄິດແບ່ງພັກ, ແຍກພວກ, ຈຸ້ມເຈື້ອເຊື້ອສາຍ ແລະ ກຸ່ມກ້ອນ, ຕື່ນຕົວຕໍ່ານິຕິຊົມຕົນເອງ ແລະ ເພື່ອນສະຫາຍ; ຮັບພິຈາລະນາ, ແກ້ໄຂຄຳຕຳນິຕິຊົມດ້ວຍຄວາມຈິງໃຈ, ມີທັດສະນະມະຫາຊົນ ແລະ ທັດສະນະແຮງງານຖືກຕ້ອງ.

3. **ດ້ານຄວາມຮູ້-ຄວາມສາມາດ**

- ມີຄວາມຮູ້ພື້ນຖານກ່ຽວກັບລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ; ກຳແໜ້ນແນວທາງແຜນນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ;
- ມີລະດັບວິຊາສະເພາະໃດໜຶ່ງ, ມີລະດັບຄວາມຮູ້ດ້ານກົດໝາຍທີ່ສົມຄູ່ກັບໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ, ມີຄວາມຮູ້ພາສາຕ່າງປະເທດ, ສາມາດນຳໃຊ້ເຕັກໂນໂລຊີທັນສະໄໝ ແລະ ການສື່ສານ ທີ່ຈຳເປັນ;

- ສາມາດຄົ້ນຄວ້າ, ເຊື່ອມຊຶມກຳແໜ້ນແນວທາງແຜນນະໂຍບາຍຂອງພັກ, ກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ນຳພາຈັດຕັ້ງປະຕິບັດມີຜົນສຳເລັດ.

4. ດ້ານແບບແຜນ ການນຳພາ ແລະ ວິທີເຮັດວຽກ

- ຢຶດໝັ້ນ ແລະ ປະຕິບັດຖືກຕ້ອງແບບແຜນເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລື ຕົກລົງເປັນໝູ່ຄະນະ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ບຸກຄົນຂຶ້ນກັບການຈັດຕັ້ງ, ເຄົາລົບ ແລະ ປະຕິບັດຕາມການຕົກລົງຂອງການຈັດຕັ້ງຢ່າງເຂັ້ມງວດ; ມີການສົມທົບກົມກຽວປັດໃຈນຳພາຂອງຫົວໜ້າ ແລະ ໝູ່ຄະນະ; ເວົ້າ ແລະ ປະຕິບັດຕາມມະຕິ, ມີຄວາມເປັນເອກະພາບທາງດ້ານແນວຄິດ ແລະ ການກະທຳ;
- ເຮັດວຽກມີແຜນການ, ມີໂຄງການ, ມີການຊຸກຍູ້ຕິດຕາມ, ກວດກາ, ສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ສອງແສງລາຍງານເປັນປົກກະຕິ;
- ມີແບບແຜນນຳພາຕິດພັນກັບຮາກຖານ, ແທດຕົວຈິງ, ມີຄວາມຮັບຜິດຊອບສູງ ແລະ ເປັນແບບຢ່າງທີ່ດີ.

5. ດ້ານສຸຂະພາບ

- ມີສຸຂະພາບແຂງແຮງ ສາມາດປະຕິບັດໜ້າທີ່ການເມືອງ ທີ່ການຈັດຕັ້ງມອບໝາຍໃຫ້ສຳເລັດເປັນຢ່າງດີ.

## ມາດຕາ 4: ມາດຕະຖານພະນັກງານນຳພາ-ຄຸ້ມຄອງຂັ້ນຍຸດທະສາດຂອງພັກ - ລັດ

### 1. ມາດຕະຖານກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ

ນອກຈາກມາດຕະຖານລວມ ແລະ ມາດຕະຖານຂອງກຳມະການສູນກາງພັກແລ້ວ ຕ້ອງມີ:

- ກຳແໜ້ນທາດແທ້ປະຕິວັດ ແລະ ວິທະຍາສາດ ຂອງລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ, ມີຄວາມສະຫຼຽວສະຫຼາດໃນການໝູນໃຊ້ທິດສະດີດັ່ງກ່າວ ເຂົ້າໃນສະພາບຕົວຈິງຢ່າງຄ່ອງຕົວ, ມີສາຍຕາຍຸດທະສາດເບິ່ງກວ້າງເຫັນໄກ, ກຳແໜ້ນ ແລະ ປະຕິບັດໜ້າທີ່, ຂອບເຂດສິດຖືກຕ້ອງຕາມກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ, ຮູ້ເສີມຂະຫຍາຍຫົວຄິດປະດິດສ້າງຂອງໝູ່ຄະນະ ແລະ ຂອງມະຫາຊົນ;
- ມີຄວາມກ້າຫານ, ເດັດຂາດ ຕໍ່ສູ້ຕ້ານກັບທັດສະນະ, ແນວຄິດ, ການກະທຳທີ່ບໍ່ຖືກຕ້ອງ ແລະ ຜິດເຂວ ເພື່ອປົກປ້ອງແນວທາງຂອງພັກ, ກົດໝາຍຂອງລັດ, ເດັດດ່ຽວຢຶດໝັ້ນອຸດົມການສັງຄົມນິຍົມ;
- ກຳແໜ້ນ ແລະ ປະຕິບັດເຂັ້ມງວດຫຼັກການນຳພາຂອງພັກ, ກຳແໜ້ນວຽກງານກໍ່ສ້າງພັກ-ພະນັກງານ, ມີທັດສະນະຖືກຕ້ອງພາວະວິໄສ, ທ່ຽງທຳ, ຊື່ຕົງ ແລະ ບໍ່ອະຄະຕິ ໃນການສັງເກດ, ຕີລາຄາ ແລະ ຕົກລົງກ່ຽວກັບບັນຫາພະນັກງານ;
- ກຳແໜ້ນແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແລະ ແນວທາງການຕ່າງປະເທດຂອງພັກ;
- ເປັນຄົນທຸງເຕົ້າໂຮມຄວາມສາມັກຄີພາຍໃນກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ຄະນະບໍລິຫານງານສູນກາງພັກ, ຮູ້ເຕົ້າໂຮມຄວາມສາມັກຄີທົ່ວພັກ-ທົ່ວປວງຊົນ, ມີບົດບາດຕໍ່ສາກົນ ໄດ້ຮັບຄວາມເຊື່ອຖືຈາກພາຍໃນ ແລະ ຕ່າງປະເທດ;

- ເປັນຜູ້ທີ່ມີຄວາມເປັນແບບຢ່າງທີ່ດີໃນການປະຕິບັດແນວທາງນະໂຍບາຍຂອງພັກ ເຄົາລົບ, ປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດ ແລະ ການດຳລົງຊີວິດ;
- ເປັນກຳມະການສູນກາງພັກ ໜຶ່ງສະໄໝຂຶ້ນໄປ; ຜູ້ທີ່ຈະເລືອກຕັ້ງເປັນກຳມະການກົມການເມືອງສູນກາງພັກ ເທື່ອທຳອິດອາຍຸກະສຽນບໍ່ເກີນ 65 ປີ ແລະ ຜູ້ທີ່ເປັນກຳມະການກົມການເມືອງສູນກາງພັກແລ້ວ ຈະສືບຕໍ່ສະໝັກ ອາຍຸກະສຽນບໍ່ເກີນ 70 ປີ, ກໍລະນີຈຳເປັນແມ່ນໃຫ້ຄະນະບໍລິຫານງານສູນກາງພັກ ຕົກລົງ.

**2. ມາດຕະຖານເລຂາທິການໃຫຍ່, ປະທານປະເທດ**

ນອກຈາກມາດຕະຖານກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກແລ້ວ ຕ້ອງມີ:

- ເປັນຜູ້ທີ່ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈສູງ, ເປັນຄົນທຸງຕົ້ນໂຮມຄວາມສາມັກຄີ, ເປັນຫຼັກແຫຼ່ງໃນກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ຄະນະບໍລິຫານງານສູນກາງພັກ, ທົ່ວພັກ ແລະ ທົ່ວປວງຊົນ, ເສີມຂະຫຍາຍກຳລັງແຮງສັງລວມທົ່ວພັກ, ທົ່ວປວງຊົນລາວບັນດາເຜົ່າເພື່ອປະຕິບັດ 2 ໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ພັດທະນາປະເທດຊາດ ຕາມຈຸດໝາຍສັງຄົມນິຍົມ;
- ເປັນຜູ້ມີບົດບາດ ແລະ ຮັບຮູ້ຈາກປະເທດເພື່ອນມິດ ແລະ ສາກົນ;
- ເປັນກຳມະການກົມການເມືອງສູນກາງພັກ ໜຶ່ງສະໄໝຂຶ້ນໄປ.

**3. ມາດຕະຖານຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ**

ນອກຈາກມາດຕະຖານກຳມະການກົມການເມືອງ, ເລຂາທິການສູນກາງພັກແລ້ວ ຕ້ອງມີ:

- ກຳແໜ້ນແນວທາງການຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ, ແນວທາງມະຫາຊົນຂອງພັກ ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈຈາກກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ຄະນະບໍລິຫານງານສູນກາງພັກ, ທົ່ວພັກ - ລັດ ແລະ ທົ່ວສັງຄົມ;
- ມີຄວາມສະດຸ້ງໄວ, ມີປະສົບການໃນການນຳພາຮອບດ້ານ, ສາມາດຮັດບົດບາດເປັນໃຈກາງໃນການປະສານງານທົ່ວພັກ-ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;
- ເປັນ ກຳມະການກົມການເມືອງສູນກາງພັກ ໜຶ່ງສະໄໝຂຶ້ນໄປ.

**4. ມາດຕະຖານນາຍົກລັດຖະມົນຕີ**

ນອກຈາກມາດຕະຖານກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກແລ້ວ ຕ້ອງມີ:

- ມີຄວາມຮູ້, ຄວາມສາມາດ, ມີວິໄສທັດໃນການວາງແຜນຍຸດທະສາດພັດທະນາເສດຖະກິດ-ສັງຄົມຂອງປະເທດ; ສາມາດຈັດຕັ້ງພັນຂະຫຍາຍ, ຄຸ້ມຄອງ, ຊີ້ນຳ ແລະ ບໍລິຫານບັນດາອົງການລັດ ແລະ ອົງການປົກຄອງຂັ້ນທ້ອງຖິ່ນໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍຢ່າງເຂັ້ມງວດ;
- ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈຈາກ ພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ; ເປັນຜູ້ມີບົດບາດ, ຮັບຮູ້ຈາກປະເທດເພື່ອນມິດ ແລະ ສາກົນ;
- ເປັນ ກຳມະການກົມການເມືອງສູນກາງພັກ ໜຶ່ງສະໄໝຂຶ້ນໄປ.

5. **ມາດຕະຖານປະທານສະພາແຫ່ງຊາດ**

ນອກຈາກ ມາດຕະຖານກຳມະການກົມການເມືອງ, ເລຂາທິການສູນກາງພັກແລ້ວ ຕ້ອງມີ:

- ມີຄວາມຮູ້, ຄວາມສາມາດ, ມີວິໄສທັດໃນການຊີ້ນຳຫັນແນວທາງແຜນນະໂຍບາຍຂອງພັກເປັນກົດໝາຍຂອງລັດ; ສາມາດຊີ້ນຳ - ນຳພາຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍຂອງລັດ ແລະ ການຕົກລົງບັນຫາສຳຄັນຂອງປະເທດຊາດ;
- ມີຄວາມຮູ້ ແລະ ກຳແໜ້ນເລິກເຊິ່ງລະບົບກົດໝາຍຂອງປະເທດຕົນ, ສາມາດນຳພາ, ອຳນວຍຄວບຄຸມກອງປະຊຸມສະພາແຫ່ງຊາດ ຢ່າງມີປະສິດທິພາບ;
- ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈຈາກພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ; ເປັນຜູ້ມີບົດບາດ ແລະ ຮັບຮູ້ຈາກປະເທດເພື່ອນມິດ ແລະ ສາກົນ;
- ເປັນ ກຳມະການກົມການເມືອງສູນກາງພັກໜຶ່ງສະໄໝຂຶ້ນໄປ ແລະ ເປັນສະມາຊິກສະພາແຫ່ງຊາດ.

6. **ມາດຕະຖານປະທານສູນກາງແນວລາວສ້າງຊາດ**

ນອກຈາກມາດຕະຖານລວມຂອງກຳມະການກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກແລ້ວ, ປະທານສູນກາງແນວລາວສ້າງຊາດ ຕ້ອງມີ:

- ເປັນຜູ້ມີບົດບາດ, ສາມາດປຸກລະດົມເຕົ້າໂຮມຄວາມສາມັກຄີປະຊາຊົນ ຊັ້ນຄົນຕ່າງໆ;
- ມີຄວາມເຂົ້າໃຈກ່ຽວກັບວຽກງານແນວໂຮມ ແລະ ສາສະໜາໃນລະດັບແນ່ນອນ;
- ເປັນ ກຳມະການກົມການເມືອງສູນກາງພັກ.

7. **ມາດຕະຖານຮອງນາຍົກລັດຖະມົນຕີ.**

ນອກຈາກມາດຕະຖານກຳມະການສູນກາງພັກແລ້ວ ຕ້ອງມີ:

- ມີຄວາມຮູ້, ຄວາມສາມາດ, ໃນການວາງແຜນຍຸດທະສາດພັດທະນາເສດຖະກິດ-ສັງຄົມ. ສາມາດຈັດຕັ້ງພັນຂະຫຍາຍ ຄຸ້ມຄອງ ຊີ້ນຳບັນດາອົງການລັດທີ່ຕົນເອງຮັບຜິດຊອບ ແລະ ອົງການປົກຄອງຂັ້ນທ້ອງຖິ່ນໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ, ສັງຄົມດ້ວຍກົດໝາຍເຂັ້ມງວດ;
- ມີບົດຮຽນ ແລະ ປະສົບການໃນການຊີ້ນຳ - ນຳພາວຽກງານ ຄຸ້ມຄອງບໍລິຫານລັດຢູ່ສູນກາງ ຫຼື ທ້ອງຖິ່ນມາແລ້ວ;
- ເປັນ ກຳມະການສູນກາງພັກ ໜຶ່ງສະໄໝຂຶ້ນໄປ.

8. **ມາດຕະຖານຮອງປະທານສະພາແຫ່ງຊາດ**

ນອກຈາກມາດຕະຖານກຳມະການສູນກາງພັກແລ້ວ ຕ້ອງມີ:

- ມີຄວາມຮູ້, ຄວາມສາມາດຊີ້ນຳ, ຫັນແນວທາງແຜນນະໂຍບາຍຂອງພັກ ເປັນກົດໝາຍຂອງລັດ ຊຶ່ງເຂດວຽກງານຕົນຮັບຜິດຊອບ ແລະ ຊີ້ນຳ - ນຳພາຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ;
- ມີຄວາມຮູ້, ກຳແໜ້ນລະບົບກົດໝາຍຂອງປະເທດ, ສາມາດນຳພາ, ອຳນວຍຄວບຄຸມກອງປະຊຸມສະພາແຫ່ງຊາດ ຢ່າງມີປະສິດທິພາບ;
- ມີບົດຮຽນ ແລະ ປະສົບການ ໃນການນຳພາວຽກງານດີເດັ່ນຢູ່ສູນກາງ ຫຼື ທ້ອງຖິ່ນມາແລ້ວ;
- ເປັນ ກຳມະການສູນກາງພັກ ໜຶ່ງສະໄໝຂຶ້ນໄປ ແລະ ເປັນສະມາຊິກສະພາແຫ່ງຊາດ.

ມາດຕາ 5: ມາດຕະຖານພະນັກງານນຳພາ-ຄຸ້ມຄອງຂັ້ນສູງຂອງພັກ - ລັດ

1. **ມາດຕະຖານກຳມະການສູນກາງພັກ**

ນອກຈາກມາດຕະຖານລວມພະນັກງານນຳພາ-ຄຸ້ມຄອງແລ້ວ ກຳມະການສູນກາງພັກ ຕ້ອງມີ:

- ມີວິໄສທັດເບິ່ງກວ້າງເຫັນໄກ ສາມາດຄົ້ນຄວ້າປະກອບຄຳເຫັນໃນການປັບປຸງບູລະນະແນວທາງແຜນນະໂຍບາຍ ຂອງພັກ, ກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ;
- ສາມາດຄົ້ນຄວ້າ, ກຳແໜ້ນແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງຂັ້ນເທິງ ແລະ ສະພາບຄວາມເປັນຈິງຂອງຂະແໜງການ ຫຼື ທ້ອງຖິ່ນຕົນ, ຫັນເປັນອັນລະອຽດ, ສາມາດນຳພາເຕົ້າໂຮມກຳລັງແຮງສັງລວມ ຊີ້ນຳເພື່ອຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມຢູ່ຂະແໜງການ ຫຼື ທ້ອງຖິ່ນຕົນ;
- ກ້າຫານ ເດັດຂາດຕໍ່ສູ້ກັບທັດສະນະຜິດຂວາ, ປະກົດການຫຍໍ້ທໍ້ໃນການຈັດຕັ້ງ ແລະ ສັງຄົມ ເພື່ອປົກປ້ອງແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ ແລະ ຄວາມຍຸຕິທຳໃນສັງຄົມ;
- ມີປະສົບການ ແລະ ເຮັດສຳເລັດໜ້າທີ່ໃນຕຳແໜ່ງໃດໜຶ່ງ ເປັນຫຼັກແຫຼ່ງໃນຄະນະບໍລິຫານງານພັກກະຊວງ-ອົງການ, ຄະນະບໍລິຫານງານພັກແຂວງ-ນະຄອນຫຼວງ ຫຼື ອົງການຈັດຕັ້ງມະຫາຊົນຂັ້ນສູນກາງມາກ່ອນ. ຜູ້ຈະສະໝັກເປັນກຳມະການສົມບູນສູນກາງພັກ ເທື່ອທຳອິດຕ້ອງມີອາຍຸພັກ 10 ປີ ຂຶ້ນໄປ, ອາຍຸກະສຽນບໍ່ເກີນ 60 ປີ, ຜູ້ເກົ່າທີ່ຈະສືບຕໍ່ສະໝັກອາຍຸກະສຽນບໍ່ເກີນ 65 ປີ;
- ກຳມະການສຳຮອງສູນກາງພັກ ຕ້ອງມີອາຍຸພັກ 7 ປີ ແລະ ອາຍຸກະສຽນບໍ່ເກີນ 50 ປີ.

2. **ມາດຕະຖານເລຂາຄະນະບໍລິຫານງານພັກກະຊວງ - ອົງການ, ແຂວງ - ນະຄອນຫຼວງ**

ນອກຈາກມາດຕະຖານກຳມະການປະຈຳພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງແລ້ວ ຕ້ອງມີ:

- ມີຄວາມຮູ້, ຄວາມສາມາດໂດດເດັ່ນ ແລະ ມີປະສົບການສູງໃນວຽກງານຕົນຮັບຜິດຊອບ, ສາມາດເປັນຄັນທຸງເຕົ້າໂຮມຄວາມສາມັກຄີພາຍໃນຄະນະບໍລິຫານງານພັກ, ຄະນະປະຈຳພັກ ແລະ ທົ່ວອົງຄະນະພັກຂັ້ນຕົນ;
- ກຳແໜ້ນແນວທາງການຈັດຕັ້ງວຽກງານກໍ່ສ້າງພັກ-ພະນັກງານ, ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງພັກ, ແນວທາງມະຫາຊົນຂອງພັກ, ເພື່ອຊີ້ນຳທົ່ວອົງຄະນະພັກຂະແໜງການ ແລະ ທ້ອງຖິ່ນຕົນ;
- ເປັນກຳມະການປະຈຳພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ ໜຶ່ງສະໄໝຂຶ້ນໄປ.

3. **ມາດຕະຖານຮອງເລຂາຄະນະບໍລິຫານງານພັກກະຊວງ - ອົງການ, ແຂວງ - ນະຄອນຫຼວງ**

ນອກຈາກມາດຕະຖານລວມ ແລະ ມາດຕະຖານກຳມະການຄະນະປະຈຳພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງແລ້ວ ຕ້ອງມີ:

- ກຳແໜ້ນແນວທາງການຈັດຕັ້ງວຽກງານກໍ່ສ້າງພັກ-ພະນັກງານ, ແນວທາງມະຫາຊົນຂອງພັກ, ເພື່ອໝູນໃຊ້ເຂົ້າວຽກງານຢູ່ຂະແໜງການ ແລະ ທ້ອງຖິ່ນຕົນ;
- ມີຄວາມສະດຸງໄວ, ມີປະສົບການໃນການຊີ້ນຳ - ນຳພາຮອບດ້ານ, ເປັນໃຈກາງປະສານງານທົ່ວອົງຄະນະພັກ ແລະ ອົງການ ຈັດຕັ້ງມະຫາຊົນ ໃນຂະແໜງການ ແລະ ທ້ອງຖິ່ນຕົນ;

- ກຳແໜ້ນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ວຽກງານສະພາປະຊາຊົນຂັ້ນທ້ອງຖິ່ນ ແລະ ວຽກງານ 3 ສ້າງ;
- ເປັນ ກຳມະການປະຈຳພັກ ຫຼື ກຳມະການຄະນະບໍລິຫານງານພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ ໜຶ່ງສະໄໝຂຶ້ນໄປ.

4. **ມາດຕະຖານລັດຖະມົນຕີ, ຫົວໜ້າອົງການ ແລະ ທຽບເທົ່າ**

ນອກຈາກມາດຕະຖານລວມຂອງພະນັກງານນຳພາ-ຄຸ້ມຄອງແລ້ວ ຕ້ອງມີ:

- ມີລະດັບຄວາມຮູ້, ມີຄວາມສາມາດຫັນແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ, ເຂົ້າໃຈເລິກເຊິ່ງວຽກງານຄຸ້ມຄອງບໍລິຫານລັດ ເພື່ອກຳນົດທິດທາງ ແຜນການ, ໂຄງການພັດທະນາຂະແໜງການຕົນ;
- ສາມາດສະຫຼຸບ, ຖອດຖອນບົດຮຽນ ແລະ ຊອກຫັນບັນດາມາດຕະການວິທີການແກ້ໄຂບັນຫາທີ່ເກີດຂຶ້ນໃນຂະແໜງການຕົນ;
- ມີຄວາມຮູ້, ມີບົດຮຽນໃນການນຳພາ ແລະ ບໍລິຫານວຽກງານຂະແໜງທີ່ຖືກຮັບຜິດຊອບ; ຕັດສິນບັນຫາເດັດຂາດຖືກທິດ, ທັນເວລາ ເພື່ອຕົກລົງແກ້ໄຂບັນຫາຫຍຸ້ງຍາກ ແລະ ສັບສົນຂຶ້ນກັບຂະແໜງຕົນຮັບຜິດຊອບ;
- ມີປະສົບການ ແລະ ສຳເລັດໃນໜ້າທີ່ຕຳແໜ່ງນຳພາ-ຄຸ້ມຄອງໃດໜຶ່ງມາແລ້ວ;
- ຜູ້ເປັນ ເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ອາຍຸກະສຽນບໍ່ເກີນ 50 ປີ.

5. **ມາດຕະຖານຫົວໜ້າໄອຍະການປະຊາຊົນສູງສຸດ, ປະທານສານປະຊາຊົນສູງສຸດ ແລະ ປະທານອົງການກວດສອບແຫ່ງລັດ**

ນອກຈາກມາດຕະຖານລວມ ແລະ ມາດຕະຖານສະເພາະຂະແໜງການທີ່ກົດໝາຍກຳນົດແລ້ວ ຕ້ອງມີ:

- ມີລະດັບຄວາມຮູ້, ກຳແໜ້ນ ແລະ ສາມາດຫັນແນວທາງແຜນນະໂຍບາຍຂອງພັກ, ກົດໝາຍຂອງລັດ ເປັນທິດທາງ, ແຜນການ, ໂຄງການພັດທະນາຂະແໜງການຕົນ;
- ມີຄວາມຮູ້ເຂົ້າໃຈລະບົບກົດໝາຍຂອງ ສປປ ລາວ ຢ່າງເລິກເຊິ່ງ ແລະ ເຂົ້າໃຈພື້ນຖານກົດໝາຍສາກົນ;
- ເປັນຜູ້ມີຄວາມບໍລິສຸດສັດຊື່ຕໍ່ພັກ, ຕໍ່ລັດ, ຕໍ່ປະຊາຊົນ ມີຄວາມທ່ຽງທຳພາວະວິໄສເດັດຂາດເຂັ້ມງວດ ໃນການປົກປ້ອງແນວທາງ, ປົກປ້ອງກົດໝາຍ, ປົກປ້ອງພົນປະໂຫຍດອັນຊອບທຳຂອງປະຊາຊົນ, ຂອງປະເທດຊາດ ແລະ ຄວາມຍຸຕິທຳໃນສັງຄົມ;
- ມີປະສົບການ ແລະ ພົນສຳເລັດໃນໜ້າທີ່ຕຳແໜ່ງນຳພາ-ຄຸ້ມຄອງໃດໜຶ່ງມາແລ້ວ.

6. **ມາດຕະຖານເຈົ້າແຂວງ - ເຈົ້າຄອງນະຄອນຫຼວງ**

ນອກຈາກມາດຕະຖານລວມພະນັກງານນຳພາ-ຄຸ້ມຄອງແລ້ວ ເຈົ້າແຂວງ-ເຈົ້າຄອງນະຄອນຫຼວງ ຕ້ອງມີ:

- ມີລະດັບຄວາມຮູ້ທາງດ້ານກົດໝາຍ, ຮູ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີຄວາມສາມາດຫັນແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ, ເຂົ້າໃຈ

ເລິກເຊິ່ງວຽກງານຄຸ້ມຄອງບໍລິຫານລັດ ເພື່ອກຳນົດທິດທາງແຜນການ, ໂຄງການພັດທະນາທ້ອງຖິ່ນຕົນ;
- ເປັນໃຈກາງເຕົ້າໂຮມຄວາມສາມັກຄີ ແລະ ກຳແໜ້ນສະພາບຄວາມເປັນຈິງຂອງທ້ອງຖິ່ນ;
- ສາມາດສະຫຼຸບ, ຖອດຖອນບົດຮຽນ ແລະ ຊອກເຫັນມາດຕະການວິທີການແກ້ໄຂບັນຫາທີ່ເກີດຂຶ້ນໃນທ້ອງຖິ່ນຕົນ;
- ມີປະສົບການ ແລະ ຜົນສຳເລັດໃນໜ້າທີ່ຕຳແໜ່ງນຳພາ-ຄຸ້ມຄອງໃດໜຶ່ງມາແລ້ວ.

**7. ມາດຕະຖານຮອງລັດຖະມົນຕີ, ຮອງຫົວໜ້າອົງການ ແລະ ທຽບເທົ່າ**

ນອກຈາກມາດຕະຖານລວມຂອງພະນັກງານນຳພາ-ຄຸ້ມຄອງແລ້ວ ຕ້ອງມີ:
- ມີລະດັບຄວາມຮູ້, ມີຄວາມສາມາດຫັນແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ ແລະ ເຂົ້າໃຈເລິກເຊິ່ງວຽກງານຄຸ້ມຄອງບໍລິຫານລັດ; ເພື່ອກຳນົດທິດທາງແຜນການ, ໂຄງການພັດທະນາຂະແໜງການຕົນ;
- ມີຄວາມຮູ້ທາງດ້ານວິຊາສະເພາະທີ່ແນ່ນອນ ແລະ ມີປະສົບການໃນຂະແໜງການທີ່ຖືກມອບໝາຍ;
- ສາມາດສະຫຼຸບ, ຖອດຖອນບົດຮຽນ ແລະ ຊອກເຫັນບັນດາມາດຕະການວິທີການແກ້ໄຂບັນຫາທີ່ເກີດຂຶ້ນໃນຂົງເຂດວຽກງານຕົນຮັບຜິດຊອບ;
- ມີຜົນສຳເລັດໃນໜ້າທີ່ຕຳແໜ່ງນຳພາ-ຄຸ້ມຄອງໃດໜຶ່ງມາແລ້ວ, ເປັນຜູ້ໜຸ່ມແໜ້ນ ແລະ ມີອະນາຄົດເປັນພະນັກງານສືບທອດປ່ຽນແທນ;
- ຜູ້ເປັນ ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ອາຍຸກະສຽນບໍ່ເກີນ 45 ປີ.

**8. ມາດຕະຖານຮອງຫົວໜ້າໄອຍະການປະຊາຊົນສູງສຸດ, ຮອງປະທານສານປະຊາຊົນສູງສຸດ ແລະ ຮອງປະທານອົງການກວດສອບແຫ່ງລັດ**

ນອກຈາກມາດຕະຖານລວມ, ມາດຕະຖານສະເພາະຂະແໜງການທີ່ກົດໝາຍກຳນົດແລ້ວ ຕ້ອງມີ:
- ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ເປັນເອກະພາບສູງກັບແນວທາງປ່ຽນແປງໃໝ່ຂອງພັກ, ມີຈິດໃຈຕື່ນຕົວເປັນເຈົ້າການຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ, ມີຄວາມສັດຊື່, ທ່ຽງທຳ ແລະ ມີຄວາມເດັດຂາດຕັດສິນບັນຫາ;
- ມີລະດັບຄວາມຮູ້ ແລະ ເຂົ້າໃຈເລິກເຊິ່ງກ່ຽວກັບກົດໝາຍຂອງປະເທດ ແລະ ສາກົນ; ມີຄວາມສາມາດຫັນແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ ເປັນແຜນການ, ໂຄງການພັດທະນາວຽກງານຕົນຮັບຜິດຊອບ ແລະ ຊີ້ນຳຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ; ມີຜົນສຳເລັດໃນໜ້າທີ່ຕຳແໜ່ງນຳພາ-ຄຸ້ມຄອງໃດໜຶ່ງມາແລ້ວ, ເປັນຜູ້ໜຸ່ມແໜ້ນ ແລະ ມີອະນາຄົດ ເປັນພະນັກງານສືບທອດປ່ຽນແທນ.

**9. ມາດຕະຖານຮອງເຈົ້າແຂວງ - ຮອງເຈົ້າຄອງນະຄອນຫຼວງ**

ນອກຈາກມາດຕະຖານລວມພະນັກງານນຳພາ-ຄຸ້ມຄອງແລ້ວ ຮອງເຈົ້າແຂວງ-ຮອງເຈົ້າຄອງນະຄອນຫຼວງ ຕ້ອງມີ:
- ເປັນໃຈກາງເຕົ້າໂຮມຄວາມສາມັກຄີ ແລະ ກຳແໜ້ນສະພາບຄວາມເປັນຈິງຂອງທ້ອງຖິ່ນຕົນເພື່ອຊີ້ນຳ - ນຳພາແກ້ໄຂບັນຫາວຽກງານຕາມລະບຽບກົດໝາຍ;
- ສາມາດສະຫຼຸບ, ຖອດຖອນບົດຮຽນ ແລະ ຊອກເຫັນມາດຕະການວິທີການແກ້ໄຂບັນຫາທີ່ເກີດຂຶ້ນໃນທ້ອງຖິ່ນຕົນ;

- ມີຜົນສຳເລັດໃນໜ້າທີ່ຕຳແໜ່ງນຳພາ-ຄຸ້ມຄອງໃດໜຶ່ງມາແລ້ວ, ເປັນຜູ້ໜຸ່ມແໜ້ນ ແລະ ມີອະນາຄົດ ເປັນພະນັກງານສືບທອດປ່ຽນແທນ.

**ມາດຕາ 6 : ມາດຕະຖານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ-ນະຄອນຫຼວງ**

ນອກຈາກມາດຕະຖານລວມ ແລະ ມາດຕະຖານສະເພາະສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງທີ່ກົດໝາຍກຳນົດແລ້ວ ຕ້ອງມີ:

- ມີທັດສະນະຫຼັກໝັ້ນ ການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ລັດ, ຕໍ່ປະຊາຊົນ, ກຳແໜ້ນແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ ແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ ແລະ ທ້ອງຖິ່ນແຕ່ລະໄລຍະ;
- ມີຄວາມຮູ້, ເຂົ້າໃຈກ່ຽວກັບລັດຖະທຳມະນູນ ແລະ ລະບົບກົດໝາຍຂອງປະເທດ, ສາມາດຄົ້ນຄວ້າປະກອບຄຳຄິດ, ຄຳເຫັນໃນການປັບປຸງບູລະນະຮ່າງກົດໝາຍແຕ່ລະຂົງເຂດວຽກງານ;
- ເປັນຕົວແທນທີ່ແທ້ຈິງໃຫ້ແກ່ຈຸດຈຳນົງ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນລາວທຸກຊັ້ນຄົນ.

**ມາດຕາ 7: ມາດຕະຖານຄະນະບໍລິຫານງານພັກກະຊວງ-ອົງການ, ແຂວງ - ນະຄອນຫຼວງ**

**1. ມາດຕະຖານກຳມະການຄະນະບໍລິຫານງານພັກກະຊວງ - ອົງການ, ແຂວງ - ນະຄອນຫຼວງ**

ນອກຈາກມາດຕະຖານລວມຂອງພະນັກງານນຳພາ-ຄຸ້ມຄອງແລ້ວ ຕ້ອງມີ:

- ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນຄວາມເປັນເອກະພາບສູງຕໍ່ແນວທາງປ່ຽນແປງໃໝ່ຂອງພັກ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆທີ່ເກີດຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ;
- ມີຄວາມບໍລິສຸດສັດຊື່ຕໍ່ພັກ, ຕໍ່ການຈັດຕັ້ງ, ຕໍ່ປະຊາຊົນ ແລະ ໝູ່ຄະນະ, ມີແບບແຜນດຳລົງຊີວິດປອດໃສ, ບໍ່ສວຍໃຊ້ຖານະຕຳແໜ່ງ, ໜ້າທີ່ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ, ພັກພວກ, ທ້ອງຖິ່ນ ແລະ ຊົນເຜົ່າຂອງຕົນ;
- ມີຄວາມຮູ້ດ້ານທິດສະດີການເມືອງ, ວຽກງານກໍ່ສ້າງພັກ ແລະ ວຽກງານພະນັກງານ, ຮູ້ເຕົ້າໂຮມຄວາມສາມັກຄີ, ຮູ້ປຸກລະດົມຂົນຂວາຍມະຫາຊົນ, ຮູ້ຈັດຕັ້ງນຳພາພະນັກງານ, ສະມາຊິກພັກປະຕິບັດໜ້າທີ່ການເມືອງຢູ່ຂະແໜງການ ແລະ ທ້ອງຖິ່ນຕົນແຕ່ລະໄລຍະ;
- ສາມາດອຳນວຍ ຄວບຄຸມວຽກງານ, ມີປະສົບການໃນໜ້າທີ່ວຽກງານຂົງເຂດທີ່ຕົນຮັບຜິດຊອບ ມີຄວາມສາມາດແກ້ໄຂກໍລະນີຕ່າງໆ ຢ່າງຄ່ອງແຄ້ວຖືກຕ້ອງ ແລະ ທັນເວລາ;
- ຜູ້ທີ່ຈະເປັນກຳມະການຄະນະບໍລິຫານງານພັກກະຊວງ - ອົງການ, ແຂວງ - ນະຄອນຫຼວງເທື່ອທຳອິດ ຕ້ອງມີອາຍຸພັກ 7 ປີຂຶ້ນໄປ, ອາຍຸກະສຽນບໍ່ເກີນ 55 ປີ ແລະ ເປັນກຳມະການໃນຄະນະພັກຂັ້ນໃດໜຶ່ງ ໜຶ່ງສະໄໝຂຶ້ນໄປ;
- ມີສຸຂະພາບດີ ສາມາດປະຕິບັດວຽກງານໄດ້ຕະຫຼອດສະໄໝກອງປະຊຸມໃຫຍ່ ແລະ ມີອະນາຄົດເປັນພະນັກງານສືບທອດປ່ຽນແທນ.

**2. ມາດຕະຖານກຳມະການປະຈຳພັກກະຊວງ - ອົງການ, ແຂວງ - ນະຄອນຫຼວງ**

ນອກຈາກມາດຕະຖານ ກຳມະການຄະນະບໍລິຫານງານພັກກະຊວງ - ອົງການ, ແຂວງ - ນະຄອນຫຼວງແລ້ວ ຕ້ອງມີ:

- ມີຄວາມສາມາດຫັນແນວທາງແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ມະຕິກອງປະຊຸມໃຫຍ່ຂັ້ນຕົນເຂົ້າໃນການສ້າງແຜນການ, ໂຄງການລະອຽດ, ນຳພາປະຕິບັດຢູ່ຂະແໜງການ ແລະ ທ້ອງຖິ່ນຕົນ;

- ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈໃນຄະນະບໍລິຫານງານພັກ ແລະ ທົ່ວອົງຄະນະພັກຂັ້ນຕົນ, ເປັນແບບຢ່າງນໍາພາໃນທຸກວຽກງານ, ເປັນຜູ້ກໍາແໜ້ນ ແລະ ຍຶດໝັ້ນອຸດົມການສັງຄົມນິຍົມ;
- ເປັນກໍາມະການຄະນະບໍລິຫານງານພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ ມາແລ້ວໜຶ່ງສະໄໝ.

**ມາດຕາ 8: ມາດຕະຖານພະນັກງານນໍາພາ - ຄຸ້ມຄອງ, ບັນຊາຢູ່ກໍາລັງປະກອບອາວຸດ**

ນອກຈາກມາດຕະຖານລວມຂອງພະນັກງານນໍາພາ-ຄຸ້ມຄອງ ແລະ ມາດຕະຖານທີ່ໄດ້ກໍານົດໄວ້ໃນກົດໝາຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍ ວ່າດ້ວຍກໍາລັງປ້ອງກັນຄວາມສະຫງົບປະຊາຊົນແລ້ວ ຕ້ອງມີ:

- ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ຈໍາແນກມິດ-ສັດຕູຈະແຈ້ງ, ມີອຸດົມການສັງຄົມນິຍົມ, ມີນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄວາມຈົງຮັກພັກດີຕໍ່ພັກ ຕໍ່ປະຊາຊົນ, ມີນໍ້າໃຈຕໍ່ສູ້ເດັດດ່ຽວພິລະອາດຫານ, ມີຄວາມເສຍສະຫຼະສູງ ແລະ ທົນທານໜຽວແໜ້ນ, ມີຄວາມສາມາດ, ມີໄຫວພິບໃນການແກ້ໄຂກໍລະນີຕ່າງໆ, ເປັນເຈົ້າການທັບມ້າງທຸກກົນອຸບາຍມ້າງເພຂອງສັດຕູ ແລະ ບັນດາອິດທິກໍາລັງປໍລະປັກໃຫ້ປະລາໄຊ, ເຄົາລົບ ແລະ ປະຕິບັດລະບຽບວິໄນຂອງກໍາລັງເຂັ້ມງວດ;
- ມີຄວາມຮູ້, ກໍາແໜ້ນແນວທາງແຜນນະໂຍບາຍຂອງພັກ, ສາມາດຈັດຕັ້ງປະຕິບັດບົດບາດນໍາພາ, ບັນຊາວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
- ເປັນເຈົ້າການນໍາພາປັບປຸງ, ສ້າງ ແລະ ພັດທະນາກໍາລັງທັງລົບໃຫ້ເຂົ້າສູ່ລະບຽບແບບແຜນ.

**ມາດຕາ 9: ມາດຕະຖານພະນັກງານນໍາພາ-ຄຸ້ມຄອງທີ່ມີຕໍາແໜ່ງບໍລິຫານປະເພດ 1 ແລະ ປະເພດ 2**

ນອກຈາກ ມາດຕະຖານລວມ ຂອງພະນັກງານນໍາພາ-ຄຸ້ມຄອງແລ້ວ ຕ້ອງມີ:

- ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ຈໍາແນກມິດ - ສັດຕູຈະແຈ້ງ, ມີປະຫວັດຕົ້ນກໍາເນີດຈະແຈ້ງ, ການເຄື່ອນໄຫວດີ;
- ເປັນເອກະພາບສູງກັບແນວທາງປ່ຽນແປງໃໝ່ຂອງພັກ ແລະ ຮູ້ຈັດຕັ້ງຜັນຂະຫຍາຍແນວທາງ, ມະຕິ, ຄໍາສັ່ງຂອງພັກ, ລະບຽບ, ກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມເຂົ້າໃນໜ້າທີ່ການເມືອງທີ່ຖືກມອບໝາຍ;
- ຕ້ານກັບບັນດາທັດສະນະທີ່ຜິດຂວາ ແລະ ປົກປ້ອງແນວທາງແຜນນະໂຍບາຍຂອງພັກ;
- ມີປະສົບການ ແລະ ມີຜົນສໍາເລັດພົ້ນເດັ່ນໃນໜ້າທີ່ຕໍາແໜ່ງນໍາພາ-ຄຸ້ມຄອງມາກ່ອນ.

**ມາດຕາ 10: ມາດຕະຖານຄະນະບໍລິຫານງານພັກເມືອງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ, ຮອງເຈົ້າເມືອງ, ຮອງເຈົ້ານະຄອນ ແລະ ຮອງຫົວໜ້າເທດສະບານ**

**1. ມາດຕະຖານກໍາມະການຄະນະບໍລິຫານງານພັກເມືອງ, ນະຄອນ ແລະ ເທດສະບານ**

ນອກຈາກມາດຕະຖານລວມຂອງພະນັກງານນໍາພາ-ຄຸ້ມຄອງແລ້ວ ຕ້ອງມີ:

- ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນຄວາມເປັນເອກະພາບສູງຕໍ່ແນວທາງປ່ຽນແປງໃໝ່ຂອງພັກ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆທີ່ເກີດຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ;
- ມີຄວາມບໍລິສຸດສັດຊື່ຕໍ່ພັກ, ຕໍ່ການຈັດຕັ້ງ, ຕໍ່ປະຊາຊົນ ແລະ ໝູ່ຄະນະ, ມີແບບແຜນດໍາລົງຊີວິດປອດໃສ, ບໍ່ສວຍໃຊ້ຖານະຕໍາແໜ່ງ, ໜ້າທີ່ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ, ພັກພວກ, ທ້ອງຖິ່ນ ແລະ ຊົນເຜົ່າຂອງຕົນ;
- ມີຄວາມຮູ້ດ້ານທິດສະດີການເມືອງ, ວຽກງານກໍ່ສ້າງພັກ ແລະ ວຽກງານພະນັກງານ, ຮູ້ເຕົ້າໂຮມຄວາມສາມັກຄີ, ຮູ້ປຸກລະດົມຂົນຂວາຍມະຫາຊົນ, ຮູ້ຈັດຕັ້ງນໍາພາ ພະນັກງານ, ສະມາຊິກພັກ ປະຕິບັດໜ້າທີ່ການເມືອງຂັ້ນຕົນແຕ່ລະໄລຍະ;

- ສາມາດອຳນວຍ ຄວບຄຸມວຽກງານ, ມີປະສົບການໃນໜ້າທີ່ວຽກງານຂົງເຂດທີ່ຕົນຮັບຜິດຊອບ ມີຄວາມສາມາດແກ້ໄຂກໍລະນີຕ່າງໆ ຢ່າງຄ່ອງແຄ້ວທັນເວລາ;
- ຜູ້ທີ່ຈະເປັນກຳມະການຄະນະບໍລິຫານງານພັກເມືອງ, ນະຄອນ ແລະ ເທດສະບານ ເທື່ອທຳອິດ ຕ້ອງມີອາຍຸພັກ 5 ປີຂຶ້ນໄປ, ອາຍຸກະສຽນບໍ່ເກີນ 55 ປີ ແລະ ເປັນກຳມະການໃນຄະນະພັກຂັ້ນໃດໜຶ່ງ ໜຶ່ງສະໄໝຂຶ້ນໄປ;
- ມີສຸຂະພາບດີ ສາມາດປະຕິບັດວຽກງານໄດ້ຕະຫຼອດສະໄໝກອງປະຊຸມໃຫຍ່ ແລະ ມີອະນາຄົດເປັນພະນັກງານສືບທອດປ່ຽນແທນ.

2. **ມາດຕະຖານກຳມະການປະຈຳພັກເມືອງ, ນະຄອນ ແລະ ເທດສະບານ**

ນອກຈາກມາດຕະຖານ ກຳມະການຄະນະບໍລິຫານງານພັກເມືອງ, ນະຄອນ ແລະ ເທດສະບານ ແລ້ວ ຕ້ອງມີ:

- ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈໃນຄະນະບໍລິຫານງານພັກ ແລະ ທົ່ວອົງຄະນະພັກຂັ້ນຕົນ, ເປັນແບບຢ່າງນຳພາໃນທຸກວຽກງານ, ເປັນຜູ້ກຳແໜ້ນ ແລະ ຍຶດໝັ້ນອຸດົມການສັງຄົມນິຍົມ;
- ມີຄວາມສາມາດຫັນແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ ແລະ ມະຕິກອງປະຊຸມໃຫຍ່ຂັ້ນຕົນເຂົ້າໃນການສ້າງແຜນການ, ໂຄງການລະອຽດ, ນຳພາປະຕິບັດຢູ່ເມືອງຕົນໃຫ້ໄດ້ຮັບຜົນດີ;
- ເປັນກຳມະການຄະນະບໍລິຫານງານພັກເມືອງ, ເທດສະບານ ແລະ ນະຄອນ ມາແລ້ວໜຶ່ງສະໄໝ.

3. **ມາດຕະຖານເຈົ້າເມືອງ, ເຈົ້ານະຄອນ ແລະ ຫົວໜ້າເທດສະບານ**

ນອກຈາກມາດຕະຖານລວມຂອງພະນັກງານນຳພາ-ຄຸ້ມຄອງແລ້ວ ຕ້ອງມີ:

- ມີລະດັບຄວາມຮູ້, ມີຄວາມສາມາດຫັນແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ, ເຂົ້າໃຈເລິກ ເຊິ່ງວຽກງານຄຸ້ມຄອງບໍລິຫານລັດ ເພື່ອກຳນົດທິດທາງແຜນການ, ໂຄງການພັດທະນາເມືອງຕົນ;
- ເປັນໃຈກາງເຕົ້າໂຮມຄວາມສາມັກຄີ, ຮັບຮູ້ກຳແໜ້ນສະພາບຄວາມເປັນຈິງ ເມືອງຂອງຕົນເພື່ອຊີ້ນຳ, ນຳພາແກ້ໄຂບັນຫາວຽກງານຕາມລະບຽບ, ກົດໝາຍ;
- ສາມາດສະຫຼຸບ, ຖອດຖອນບົດຮຽນ ແລະ ຊອກຫັນບັນດາມາດຕະການວິທີການໃນການແກ້ໄຂບັນຫາທີ່ເກີດຂຶ້ນ ໃນເມືອງ, ນະຄອນ ແລະ ເທດສະບານຕົນ;
- ມີປະສົບການ ແລະ ສຳເລັດໜ້າທີ່ຕຳແໜ່ງນຳພາ-ຄຸ້ມຄອງໃດໜຶ່ງມາກ່ອນແລ້ວ.

4. **ມາດຕະຖານຮອງເຈົ້າເມືອງ, ຮອງເຈົ້ານະຄອນ ແລະ ຮອງຫົວໜ້າເທດສະບານ**

ນອກຈາກມາດຕະຖານລວມຂອງພະນັກງານນຳພາ-ຄຸ້ມຄອງແລ້ວ ຕ້ອງມີ:

- ມີລະດັບຄວາມຮູ້, ມີຄວາມສາມາດຫັນແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ, ເຂົ້າໃຈວຽກງານຄຸ້ມຄອງບໍລິຫານລັດ ເພື່ອກຳນົດທິດທາງແຜນການ, ໂຄງການພັດທະນາວຽກງານຕົນຮັບຜິດຊອບ;
- ເປັນໃຈກາງເຕົ້າໂຮມຄວາມສາມັກຄີ, ຮັບຮູ້ກຳໄດ້ສະພາບຄວາມເປັນຈິງເມືອງຂອງຕົນເພື່ອຊີ້ນຳ, ນຳພາແກ້ໄຂບັນຫາວຽກງານຂົງເຂດຕົນຮັບຜິດຊອບຕາມລະບຽບ, ກົດໝາຍ;
- ສາມາດສະຫຼຸບ, ຖອດຖອນບົດຮຽນ ແລະ ຊອກຫັນບັນດາມາດຕະການວິທີການໃນການແກ້ໄຂບັນຫາທີ່ເກີດຂຶ້ນ ໃນວຽກງານຕົນຮັບຜິດຊອບ;
- ມີປະສົບການ ແລະ ສຳເລັດໜ້າທີ່ຕຳແໜ່ງນຳພາ-ຄຸ້ມຄອງມາກ່ອນ.

**ມາດຕາ 11 : ມາດຕະຖານປະທານ, ຮອງປະທານສະພາບໍລິຫານລັດວິສະຫະກິດ, ຜູ້ອໍານວຍການ, ຮອງອໍານວຍການລັດວິສະຫະກິດ**

ນອກຈາກມາດຕະຖານລວມຂອງພະນັກງານນໍາພາ-ຄຸ້ມຄອງ ແລະ ມາດຕະຖານລັດວິສະຫະກິດແລ້ວ ຕ້ອງມີ:

- ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ກໍາແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຕ່ລະໄລຍະ;
- ສາມາດຈັດຕັ້ງພັນຂະຫຍາຍແຜນພັດທະນາເສດຖະກິດເຂົ້າໃນການດໍາເນີນທຸລະກິດໃຫ້ມີຜົນກໍາໄລໃຫ້ເຈົ້າຂອງທຶນ ແລະ ປະຕິບັດ ພັນທະເຂົ້າງົບປະມານຂອງລັດຕາມລະບຽບການ ແລະ ກົດໝາຍກໍານົດຢ່າງເຂັ້ມງວດ;
- ມີຄວາມບໍລິສຸດສັດຊື່, ທ່ຽງທໍາ, ປົກປ້ອງຜົນປະໂຫຍດຂອງລັດ, ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍເຂັ້ມງວດ, ຮູ້ປະຢັດ, ບໍ່ສວຍໂອກາດສໍ້ໂກງເອົາຊັບສິນຂອງລັດ, ຂອງ ລວມໝູ່ ແລະ ຂອງປະຊາຊົນ;
- ມີຄວາມຮູ້ກ່ຽວກັບການບໍລິຫານທຸລະກິດ ຕາມກົນໄກເສດຖະກິດຕະຫຼາດ ທີ່ມີການນໍາພາຂອງພັກ ແລະ ການຄຸ້ມຄອງຂອງລັດ; ເຄົາລົບ ສິດເປັນເຈົ້າຂອງຜູ້ອອກແຮງງານ ແລະ ຮູ້ຈັດຕັ້ງປຸກລະດົມໃນການຜະລິດທຸລະກິດ.

**ມາດຕາ 12: ມາດຕະຖານຄະນະພັກຮາກຖານ, ຄະນະໜ່ວຍພັກ**

ນອກຈາກມາດຕະຖານລວມຂອງພະນັກງານນໍາພາ-ຄຸ້ມຄອງແລ້ວ ຕ້ອງມີ:

- ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມບໍລິສຸດຕໍ່ພັກ, ຕໍ່ການຈັດຕັ້ງ, ຕໍ່ປະຊາຊົນ, ເປັນເອກະພາບສູງຕໍ່ພາລະກິດປ່ຽນແປງໃໝ່, ມີຫຼັກໝັ້ນມິດ-ສັດຕູຈະແຈ້ງ;
- ມີແບບແຜນດໍາລົງຊີວິດປອດໃສ, ບໍ່ຟູມເຟືອຍ, ຮູ້ເຮັດວຽກງານກໍ່ສ້າງພັກ ແລະ ວຽກງານພະນັກງານ, ຮູ້ນໍາພາເຕົ້າໂຮມ ຄວາມສາມັກຄີ, ຮູ້ປຸກລະດົມຂົນຂວາຍມະຫາຊົນ, ຮູ້ນໍາພາພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າປະຕິບັດແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ;
- ສາມາດກໍາແໜ້ນແນວທາງແຜນນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດເຂົ້າໃນວຽກຕົນຮັບຜິດຊອບຢ່າງມີຫົວຄິດປະດິດສ້າງ ແລະ ມີປະສິດທິຜົນສູງ; ມີແບບແຜນນໍາພາ, ວິທີເຮັດວຽກຖືກຕ້ອງ, ເຄົາລົບ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ;
- ຜູ້ທີ່ຈະເປັນຄະນະພັກຮາກຖານ, ຄະນະໜ່ວຍພັກ ເທື່ອທໍາອິດອາຍຸພັກ 3 ປີ ຂຶ້ນໄປ, ອາຍຸກະສຽນບໍ່ເກີນ 55 ປີ.

**ມາດຕາ 13: ຫົວໜ້າ, ຮອງຫົວໜ້າພະແນກການ ແລະ ທຽບເທົ່າຂັ້ນແຂວງ-ນະຄອນຫຼວງ, ນາຍບ້ານ, ຮອງນາຍບ້ານ**

1. **ມາດຕະຖານຫົວໜ້າ, ຮອງຫົວໜ້າພະແນກການ ແລະ ທຽບເທົ່າຂັ້ນແຂວງ-ນະຄອນຫຼວງ**

ນອກຈາກມາດຕະຖານລວມພະນັກງານນໍາພາ-ຄຸ້ມຄອງແລ້ວ ຕ້ອງມີ:

- ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄວາມບໍລິສຸດສັດຊື່ຕໍ່ພັກ, ຕໍ່ການຈັດຕັ້ງ, ຕໍ່ປະຊາຊົນ, ມີຫຼັກໝັ້ນມິດ - ສັດຕູ ຈະແຈ້ງ;

- ເປັນເອກະພາບສູງກັບແນວທາງປ່ຽນແປງໃໝ່ຂອງພັກ ແລະ ຮູ້ຈັດຕັ້ງຜັນຂະຫຍາຍແນວທາງ, ມະຕິ, ຄຳສັ່ງຂອງພັກ, ລະບຽບ, ກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມເຂົ້າໃນໜ້າທີ່ການເມືອງຕົນທີ່ຖືກມອບໝາຍ;
- ມີປະສົບການ ແລະ ສຳເລັດໜ້າທີ່ຕຳແໜ່ງນຳພາ-ຄຸ້ມຄອງໃດໜຶ່ງມາກ່ອນ.

2. **ມາດຕະຖານນາຍບ້ານ, ຮອງນາຍບ້ານ.**

- ມີຄວາມສາມາດໃນການນຳພາ ຄຸ້ມຄອງບໍລິຫານປະຊາຊົນໃນບ້ານຂອງຕົນ ເພື່ອຫັນແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດມາຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ, ມີຄວາມສາມາດໃນການວາງແຜນການ ແລະ ນຳພາປະຕິບັດແຜນພັດທະນາບ້ານ;
- ເປັນຜູ້ທີ່ມີຄວາມ ບໍລິສຸດສັດຊື່, ມີສະຕິເຄົາລົບລະບຽບກົດໝາຍ, ຮູ້ເຕົ້າໂຮມຄວາມສາມັກຄີ ແລະ ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈຈາກປະຊາຊົນ ແລະ ຊົນຄົນຕ່າງໆ ຢູ່ພາຍໃນບ້ານ;
- ໄດ້ຜ່ານການກໍ່ສ້າງ ຫຼື ບຳລຸງທິດສະດີການເມືອງ, ການປົກຄອງ ແລະ ການບໍລິຫານຄຸ້ມຄອງບ້ານ;
- ມີລະດັບການສຶກສາ ຂັ້ນລົບລ້າງການກືກໜັງສືສຳລັບບ້ານເຂດຊົນນະບົດ, ຫ່າງໄກສອກຫຼີກ; ບ້ານເຂດຊານເມືອງຈົບປະຖົມຂຶ້ນໄປ ແລະ ບ້ານຢູ່ໃນເຂດຕົວເມືອງ ໃຫ້ຈົບມັດທະຍົມຕອນຕົ້ນຂຶ້ນໄປ ແລະ ໄດ້ຮັບການບຳລຸງຄວາມຮູ້ການຄຸ້ມຄອງຕົວເມືອງ.

## ພາກທີ III
## ການຈັດຕັ້ງປະຕິບັດ

ມາດຕາ 14: ມອບໃຫ້ຄະນະຈັດຕັ້ງສູນກາງພັກ ເປັນເຈົ້າການຕິດຕາມ, ຊຸກຍູ້ ກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ແລະ ລາຍງານຂັ້ນເທິງແຕ່ລະໄລຍະ.

ມາດຕາ 15: ໃຫ້ຄະນະພັກ, ຄະນະປະຈຳພັກແຕ່ລະຂັ້ນຈັດຕັ້ງຄົ້ນຄວ້າ, ເຊື່ອມຊຶມກຳແໜ້ນມະຕິສະບັບນີ້ຢ່າງເລິກເຊິ່ງ, ຄົ້ນຄວ້າກຳນົດມາດຕະຖານສະເພາະໃຫ້ສອດຄ່ອງກັບມະຕິສະບັບນີ້ ແລະ ຊີ້ນຳ ນຳພາຈັດຕັ້ງປະຕິບັດໃຫ້ເຂັ້ມງວດ.

ມາດຕາ 16: ມະຕິສະບັບນີ້ ປ່ຽນແທນຂໍ້ກຳນົດຂອງ ກົມການເມືອງສູນກາງພັກ ສະບັບເລກທີ 04 /ກມສພ, ລົງວັນທີ 22/07/2003 ວ່າດ້ວຍມາດຕະຖານຂອງພະນັກງານ ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕ. ກົມການເມືອງສູນກາງພັກ
ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ

ບຸນຍັງ ວໍລະຈິດ